# ລອນເພງລາວ



ລວມ 100 ກວ່າເພງດັງ

ຈາກອະດີດ ເຖິງປະຈຸບັນ



ຮີບໂຮມໂດຍ : ພັນນາລີ ເທບພະວົງສາ

# ລວມເພງລາວ

## ຄົນລາວ ຮ້ອງເພງລາວ

ຮຶບໂຮມໂດຍ : ພັນນາລີ ເທບພະວົງສາ

ຄອມພິວເຕີ : ອະພິສິດ
ຈັນທະຄອນ

ພິມທີ່ : ໂຮງພິມ ດວງມາການພິມ
ໂທ: ( 020 ) 5519093
ຕາມ : ລທບ 130/ພຈ/12042007
ພິມຄັ້ງທີສາມ ປີ 2007
ຈຳນວນ 5,000 ຫົວ
© ສະຫງວນລິຂະສິດ

# ຄຳນຳ

ຂະພະເຈົ້າເຫັນວ່າ "*ເພງລາວ*" ແມ່ນມີຄວາມໝາຍຄວາມສຳຄັນຕໍ່ຄົນລາວ ມັນໄດ້ສ່ອງແສງເຖິງການດຳລົງຊີວິດໃນສັງຄົມຂອງຄົນລາວທຸກຊັ້ນຄົນ, ທຸກຍຸກ, ທຸກສະໄໝ.

ປື້ມຫົວນີ້ ອາດຈະບໍ່ຮັບໂຮມໄດ້ທຸກເພງ ທຸກແບບ ທຸກຈັງຫວະ ຂອງເພງລາວ ແຕ່ກໍ່ເປັນປື້ມເຫລັ້ມໜຶ່ງ ທີ່ສາມາດໃຊ້ເປັນປື້ມເຍືອງທາງໃຫ້ກັບຜູ້ທີ່ມັກຮ້ອງເພງ ບໍ່ວ່າຈະເປັນການເປີດປື້ມຮ້ອງດ້ວຍຕົວເອງ ຫລືຮ້ອງກັບວົງດົນຕີ ທີ່ເສບຕາມງານຕ່າງໆ ເຊັ່ນ : ງານລ້ຽງ, ງານດອງ ແລະ ງານສັງສັນຕ່າງໆ.

ອີກຢ່າງໜຶ່ງ ທາງ **ວິສາຫະກິດສ່ວນບຸກຄົນ ການຈັດພິມ ແລະ ຈຳໜ່າຍເຍົາໄວ** ມີຄວາມມຸ້ງຫວັງຢາກໃຫ້ຄົນລຸ້ນໜຸ່ມ ຮູ້ຈັກ ແລະ ມັກໃນການຮ້ອງເພງລາວ ໃຫ້ຫລາຍຂຶ້ນກວ່າເກົ່າ.

ຜູ້ອຳນວຍການ
ພັນນາລີ ເທບພະວົງສາ

# ສາລະບານ


| ໜ້າ | ເພງ | ໜ້າ | ເພງ |
|---|---|---|---|
| 1 | ຊາດລາວ | 23 | ພອນວິວາ |
| 2 | ຈຳປາເມືອງລາວ | 24 | ຫົວອົກຄົນຈົນ |
| 3 | ກ້ຽວສາວບ້ານເກີນ | 25 | ປາກຊອງແຜ່ນດິນຄຳ |
| 4 | ສຽງແຄນລາວ | 26 | ລາວຮ່ວມສຳພັນ |
| 5 | ເຢັນສະບາຍຊາວນາ | 27 | ສາວສີເມືອງ |
| 6 | ຈົດໝາຍຈາກແມ່ | 28 | ນ້ຳຕາໃນວັນແຕ່ງ |
| 7 | ປູ່ຈົ່ນ | 29 | ສະຫວັນບ້ານເຮົາ |
| 8 | ໂດຍສານສາຍໃຕ້ | 30 | ຕົວສຳຮອງ |
| 9 | ພົບກັນທີ່ອ່າງນ້ຳທຸມ | 31 | ສາວຕະກຽງນອ້ຍ |
| 10 | ຮັກສາວສີເມືອງ | 32 | ໄປໃສມາ? |
| 11 | ດາວລືມດິນ | 33 | ຢ່າກຽດກັນ |
| 12 | ສາວດົງໂດກ | 34 | ທຳມະຊາດພູເຂົາຄວາຍ |
| 13 | ເຫັນໃຈຄົນຈົນ | 35 | ໄປຄ້າຍມາ |
| 14 | ວຽງໃນຝັນ | 36 | ສະບາຍດີຫຼວງພະບາງ |
| 15 | ລາກ່ອນຈາກ | 37 | ເພື່ອກັນລືມ |
| 16 | ສາວບ້ານເກີນຍັງຄອຍ | 38 | ພູມພາບຊຽງຂວາງ |
| 17 | ປີໃໝ່ | 39 | ຮັກບໍ່ລືມ |
| 18 | ກຸຫຼາບປາກຊັນ | 40 | ຊຽງຂວາງແດນງາມ |
| 19 | ລືມໄລບ້ານປ່າ | 41 | ໄຕດຳລຳພັນ |
| 20 | ສາວໂຮງງານ | 42 | ສິນຮິດ ສິນຮັກ |
| 21 | ສາວປາກເຊ | 43 | ທຳມະຊາດເມືອງສູ້ຍ |
| 22 | ສະເໜ່ສາວຜູ້ໄທ | 44 | ຄິງເຊໂດນທີ່ຮັກ |

| ໜ້າ | ເພງ | ໜ້າ | ເພງ |
|---|---|---|---|
| 45 | ຝົນແຂ່ງແກ່ງລອຍ | 67 | ຈະພານ້ອງໄປຫຼ້ຽວ |
| 46 | ສອງຝັ່ງຂອງ | 68 | ຄາລືມຮັກຄາລືມລວງ |
| 47 | ຍັງຮັກນ້ອງຢູ່ | 69 | ວອນດອກຟ້າ |
| 48 | ບ້ານໂພນທີ່ຝັງໃຈ | 70 | ມິດຕະພາບລາວ-ໄທ |
| 49 | ປາແດກກິ້ນໃຫ | 71 | ບໍ່ລືມຫີນເຫີບ |
| 50 | ຢາກຝາກຄວາມຮັກ | 72 | ອະທິຖານຮັກ |
| 51 | ເຊື່ອອ້າຍດີກວ່າ | 73 | ສະຫວັນບ້ານນາ |
| 52 | ຮັກສາວແຄມງື່ມ | 74 | ຢາດນ້ຳຝົນຢົດນ້ຳຕາ |
| 53 | ສຽງສັ່ງຄືນຊ້ຳ | 75 | ສາມໝື່ນເມືອງເຟືອງ |
| 54 | ເຊໂປນລຳລຶກ | 76 | ຊ່ວຍເຖີດນາງໝໍ |
| 55 | ຖ້າອ້າຍມີປີກ | 77 | ລາສາວທົ່ງ |
| 56 | ໄຊກຕ່າງລາງ | 78 | ເສື້ອຂຽວທີ່ຮັກ |
| 57 | ຜູ້ຊາຍແສນລວງ | 79 | ນ້ອງຂໍຫລີກທາງ |
| 58 | ບຸ່ງພ້າວສາວງາມ | 80 | ສາວຖິ່ນແກ້ວ |
| 59 | ວິມານວຽງທອງ | 81 | ກັນຖິ່ນທີວໃຈ |
| 60 | ລືມໜາວສາວຈິ່ມ | 82 | ຢ່າລືມສັນຍາ |
| 61 | ຢ່າຫ້າມໃຈ | 83 | ຮີມຝັ່ງດອນໂຂງ |
| 62 | ລຳວົງກັນກ່ອນ | 84 | ເຜົ່າລາວເອີຍ |
| 63 | ແດນແຫ່ງອິດສະຫຼະ | 85 | ນ້ຳຖວ້ມຖິ່ນເພຍ |
| 64 | ສາລະວັນກ້າວໄປ | 86 | ແກ້ວລືມຄອນ |
| 65 | ຮັກສີພັນດອນ | 87 | ຄືນງາມໃຈແຫຼ້ |
| 66 | ກັບຄືນຖິ່ນຖານ | 88 | ຈິດໝາຍນ້ອຍ |

| ໜ້າ | ເພງ | ໜ້າ | ເພງ |
|---|---|---|---|
| 89 | ພໍກັນທີ | 114 | ຄວາຍຕູ້ບໍ່ສູ້ເກົ່າ |
| 90 | ສາວນາແກ | 116 | ຫົວໃຈເຮີຍທີ່ພະບາດໂພນທັນ |
| 91 | ຢ່າມົວເລືອກຫລາຍ | 117 | ອີກທັກວາເລັ້ນທາຍ |
| 92 | ພອນວັນເກີດ | 118 | ສາວເຮືອນແພທ່າງອນ |
| 93 | ຫີນເທີບແດນງາມ | 119 | ສາວຍາງຄຳ |
| 94 | ສວນມອນໃນອາດີດ | 120 | ຮັກສາວສາຍດ່ງວ |
| 95 | ວິເສດປານໃດຫົວໃຈລູກຜູ້ຍິງ | 122 | ສິ້ງຢື້ນໃນຝັນ |
| 96 | ມາທີຫລັງ | 123 | ຂໍເປັນແປ້ງທາຜິວ |
| 97 | ໃຜມີໃຈຮັກແທ້ | 126 | ສາວບ້ານໃດ |
| 98 | ປາກເຊແດນງາມ | 127 | ກະບະປ້າຍເຫລືອງ |
| 99 | ມ່ວນແທ້ບ້ານເຮົາ | | |
| 100 | ດາວລ້ອມເດືອນ | | |
| 101 | ເຊີນທ່ຽວເມືອງໂຂງ | | |
| 102 | ຢາກຮ້ອງໃຫ້ໂລກຟັງ | | |
| 103 | ກອດພອນປ້ອງຂ້າງ | | |
| 104 | ສະເໜ່ສາວແກ່ | | |
| 106 | ສາວຜູ້ໄທລືມທົ່ງ | | |
| 107 | ເມົາຮັກຄັກກວ່າເມົາເຫລົ້າ | | |
| 108 | ໜຶ່ງບວກໜຶ່ງ ເທົ່າກັບ ໜຶ່ງ | | |
| 109 | ເບຍລາວເບຍເສືອ | | |
| 110 | ຢຸດເຖີດນ້ຳຕາ | | |
| 112 | ຄືນບ້ານນອກ | | |

# ເພງຊາດລາວ

ເນື້ອຮ້ອງໂດຍ: ທ່ານ ສີຊະນະ ສີສານ

ທຳນອງໂດຍ: ທ່ານ ດ.ຣ ທອງດີ ສູນທອນວິຈິດ

ຊາດລາວ ຕັ້ງແຕ່ໃດມາ
ລາວທຸກທົ່ວໜ້າເຊີດຊູສຸດໃຈ
ຮ່ວມແຮງຮ່ວມຈິດຮ່ວມໃຈ
ສາມັກຄີກັນເປັນກຳລັງດຽວ
ເດັດດ່ຽວພ້ອມກັນກ້າວໜ້າ
ບູຊາຊູກຽດຂອງລາວ
ສົ່ງເສີມໃຊ້ສິດເປັນເຈົ້າ
ລາວທຸກຊົນເຜົ່າສະເໝີພາບກັນ
ບໍ່ໃຫ້ຝູງຈັກກະພັດ
ແລະພວກຂາຍຊາດເຂົ້າມາລົບກວນ
ລາວທັງມວນຊູເອກະລາດ
ອິດສະຫຼະພາບຂອງຊາດລາວໄວ້
ຕັດສິນໃຈສູ້ຊີງເອົາໄຊ
ພາຊາດກ້າວໄປສູ່ຄວາມວັດທະນາ

# ຈຳປາເມືອງລາວ

ເນື້ອຮ້ອງໂດຍ: ມະຫາພູມີ
ທຳນອງໂດຍ: ທ່ານ ອຸຕະມະ ຈຸນລະມະນີ

ໂອ ດວງຈຳປາ ເວລາຊົມນ້ອງ
ນຶກເຫັນພັນຊ່ອງ ມອງເຫັນຫົວໃຈ
ເຮົານຶກຂຶ້ນໄດ້ ໃນກິ່ນເຈົ້າຫອມ
ເຫັນສວນດອກໄມ້ ບິດາປູກໄວ້ຕັ້ງແຕ່ນານມາ
ເວລາຫງ່ວມເຫງົາ ເຈົ້າຊ່ວຍບັນເທົາເຮົາຫາຍໂສກາ
ເຈົ້າດວງຈຳປາ ຄູ່ຄຽງເຮົາມາແຕ່ຍາມນ້ອຍເອີຍ

ກິ່ນເຈົ້າສຳຄັນ ຕິດພັນຫົວໃຈ
ເປັນໜ້າຮັກໄຄ່ ແພງໄວ້ເຊີຍຊົມ
ຍາມເຫງົາເຮົາດົມ ໂອຈຳປາຫອມ
ເມື່ອດົມກິ່ນເຈົ້າ ປານພົບຊູ້ເກົ່າທີ່ພາກຈາກໄປ
ເຈົ້າເປັນດອກໄມ້ ທີ່ງາມວິໄລຕັ້ງແຕ່ໃດມາ
ເຈົ້າດວງຈຳປາ ມາລາຂວັນຮັກຂອງຮຽມນີ້ເອີຍ

ໂອ ດວງຈຳປາ ບຸບຜາເມືອງລາວ
ງາມດັ່ງດວງດາວ ຊາວລາວຊື່ນໃຈ
ເກີດຢູ່ພາຍໃນ ແດນດິນລ້ານຊ້າງ
ເມື່ອໄດ້ພັດພາກ ໜີໄປໄກຈາກບ້ານເກີດເມືອງນອນ
ເຮົາຈະເອົາເຈົ້າ ເປັນເພື່ອນຫງ່ວມເຫງົາເທົ່າສິ້ນຊີວາ
ເຈົ້າດວງຈຳປາ ມາລາງາມຍິ່ງມິ່ງເມືອງລາວເອີຍ

# ກ້ຽວສາວບ້ານເກີນ

ເນື້ອຮ້ອງ,ທຳນອງໂດຍ ບິນ ສຸດາຈັນ

ເມື່ອອ້າຍໄດ້ມາ ມາພົບສາວແຕ່ພຽງຄັ້ງດຽວ
ຫົວໃຈອ້າຍນີ້ຢາກນ້ອມໜ່ຽວ ອ້າຍຈິນຫຼິງກ້ຽວ-ກ້ຽວສາວບ້ານເກີນ
ນ້ອງຊ່າງງາມຍິ່ງ ຢາກແອບອີງນ້ອງນາງຢ່າເມີນ
ອ້າຍຂໍບອກສາວຈິ່ງເຫັນໃຈເຖີ້ນ ຜູ້ທີ່ຫຼົງເດີນພັດຖິ່ນບ້ານນາ

ອ້າຍໄດ້ຍິນຄຳ ຄຳວ່າຮັກມາຈາກຊາມໄວ
ຄຳເວົ້າສາວນີ້ຊ່າງຫຼົງໄຫຼ ຊາບຊຶ້ງຕຶງໃຈໃນດວງອຸລາ
ຈິ່ງເໝືອນຄຳເວົ້າ ທີ່ອ້າຍແລະສາວເຄີຍເວົ້າກັນມາ
ຢ່າລວງໃຫ້ອ້າຍນີ້ເສຍນ້ຳຕາ ເໝືອນນ້ຳຖ້ວມນາຂອງອ້າຍຫຼົ້ມຈົມ

ນ້ອງຂວັນຕາຈິ່ງສົງສານ ຫາກນ້ອງເຫັນໃຈອ້າຍນັ້ນ
ຈະຮັກຈອມຂວັນ ບໍ່ໃຫ້ໂສກຕົມ
ປີໜ້າຕໍ່ໄປ ຈະປູກເຂົ້າໄຮ່ເຂົ້ານາໃຫ້ສົມ
ຫາກແມ່ນດິນຟ້າໃຫ້ຄວາມອຸດົມ ຈະຂໍພິລົມໃຫ້ສົມຮັກດຽວ

ອ້າຍຈະຂໍຈຳ ດິນຖິ່ນນີ້ທີ່ເຄີຍໄດ້ຢູ່
ກັບຄວາມຮັກທີ່ນ້ອງອູ້ມຊູ ດິນຟ້າຈິ່ງຮູ້ໄວ້ເປັນສັກຂີ
ເຖິງຢູ່ໄກກັນ ຫົວໃຈອ້າຍນັ້ນບໍ່ໄດ້ໜ່າຍໜີ
ອີກປີໜ້າຈະມາອີກທີ ສູ່ຂໍຄົນດີສາວບ້ານເກີນ

24 / VII
ห้ามจำหน่าย

# ສຽງແຄນລາວ

ເນື້ອຮ້ອງ,ທຳນອງໂດຍ ສຸຕັນ ພົນສິງຄາມ

ແວ້ວສຽງແຄນ ແລນແຕແລນແຕ
ດັງມາແຕ່ ເກີດມີຊາດລາວ
ທົ່ວຖິ່ນຖານ ລ້ານຊ້າງແດນລາວ
ສຽງແຄນລາວ ດັງກ້ອງກັງວານ

ສຽງຂັບລຳ ແຕ່ເໜືອເຖິງໃຕ້
ເປົ່າແຄນໃສ່ ກ້ຽວກ່ອມປະສານ
ຄືນເດືອນແຈ້ງ ດອກຈຳປາບານ
ເຮົາພາກັນ ເປົ່າແຄນກ້ຽວສາວ

ໂອແຄນລາວ ເປົ່າເທົ່າໃດທົ່ວໃຈຍິ່ງເພີນ
ມ່ວນເຫຼືອເກີນ ຂອງຄົນລາວໃຫ້ຮັກຖິ່ນ
ຍິນສຽງແຄນອິ່ນອ້ອຍ ໃຈລະຫ້ອຍຮ່ຳຄະນຶງ ອື ອື ອື ນໍ

ເຕົ້າແຄນລາວ ເຕົ້າໂຮມເຜົ່າລາວ
ຫຼາຍຊົນເຜົ່າ ເໝືອນດັ່ງລູກແຄນ
ຮ້ອງສິ່ງສຽງ ຮັກຊາດທົ່ວແດນ
ເໝືອນລູກແຄນ ປະສານສຽງກັນ(ຊ້ຳ)

# ເຢັນສະບາຍຊາວນາ

ແຕ່ງໂດຍ: ສ. ສຸບັນ

ເຮົາ ແມ່ນລູກຊາວນາ
ບ່າແບກຄັນໄຖ ໄລ່ຄວາຍລົງທົ່ງ
ຫາກິນຢູ່ຕາມປ່າດົງ ຫາກິນຢູ່ຕາມປ່າດົງ
ເມື່ອຟ້າຄ່ຳລົງ ໂຄ້ງອວ່າຍໜ້າໄປຫາເຮືອນ
ໃຜ ວ່າຢູ່ບ້ານນາ
ນັ້ນຊື່ນຈິດໃຈ ຫລືວ່າປ່ຽວກາຍາ
ບ້ານນາມີເຂົ້າມີປາ ບ້ານນາມີເຂົ້າມີປາ
ແມ່ນຖ່ຽງນາມຸງຫຍ້າ ລົມພັດເຢັນສະບາຍ
ເອີ! ເຢັນສະບາຍ ເຢັນສະບາຍຊາວນາ (ສອງເທື່ອ)
ຍາມສວາຍ ນັ່ງຫລັງຄວາຍບັກດ່ອນ
ຂັບກາບຂັບກອນ ຟ້ອນລຳເປົ່າແຄນ
ໂອ ວ່ານ້ອງເອີຍ ນ້ອງຜູ້ຄືງກົມກ້ຽງ
ສາວວຽງຈັນຜູ້ລືຊື່ ມາຮ່ວມມືພ້ອມອ້າຍ
ຂະຫຍາຍບ້ານແປງເມືອງ ເທາະນ້ອງນາງ
ສຸກ ກໍ່ສຸກເລີດລ້ຳ
ແນວທາງເປັນທຳ ສ້າງຊີວິດຊາວນາ
ຜົວກຳທຳເພື່ອຊາດປະຊາ ຜົວກຳທຳເພື່ອຊາດປະຊາ
ອອກແຮງຕັ້ງໜ້າ ຕ້ານໄພອຶດຫິວ
ເອີ! ເຢັນສະບາຍ ເຢັນສະບາຍຊາວນາ (ສາມເທື່ອ)

# ຈົດໝາຍຈາກແມ່

ເນື້ອຮ້ອງ,ທຳນອງໂດຍ ຄຳລືຊາ ນວນສະຫວັນ

ແນມເຫັນຈົດໝາຍ
ຈາກມານດາ
ຈິດໃຈຕື້ນຕັນ
ຊອງຈົດໝາຍ

ທີ່ສົ່ງມາ
ແມ່ຮັກທາງບ້ານເກີດເຮົາ
ມີສົ້ນຢີ້ເອົາ
ຢ່າງສຸດຖະໜອມ

ເນື້ອໃນຈົດໝາຍ
ແມ່ຖາມສະບາຍ
ອັກສອນແມ່ຂຽນ
ແຕ່ມີຄວາມໝາຍ

ຂຽນຢ່າງງ່າຍດາຍ
ລູກຮັກທີ່ແມ່ຫ່ວງໃຍ
ບໍ່ງາມປານໃດ
ຍິ່ງໃຫຍ່ໄພສານ

ລູກຍັງຈົດຈຳ
ມານດາຄືນດີ
ບາດນີ້ຈົດໝາຍ
ຕົວໜັງສື

ຍາມລູກຈາກລາ
ຍັງກືກໜັງສື
ລູກມີໃນມື
ຂຽນຈາກແມ່ເອງ

ແມ່ຍັງຮັກລູກ
ແມ່ຈື່ງຂະຫຍັນ
ປະຊາສຶກສາ
ທີ່ບັນເລງ

ບໍ່ໄລລະວັນ
ຮ່ຳຮຽນຂຽນເກັ່ງ
ເໝືອນດັ່ງບົດເພງ
ຄວາມຮັກແມ່ລູກເອີຍ

# ປູ່ຈັນ

ເນື້ອຮ້ອງ,ທຳນອງໂດຍ ຄຳພູ ທະວີວັນ

ຄົນລຸ້ນປູ່
ລ້ວນແຕ່ເປັນລູກເປັນຫຼານ
ເຊື້ອສາຍລາຍລ່ອງ
ໂຄລາດວຽງຈັນຫານິນ

ເຂົາຮູ້ວ່າຄົນຢູ່ພາກອີສານ
ຂອງປູ່ຈັນຂອງລາວທັງສິ້ນ
ແບ່ງເປັນສອງພ່ອງທຳມາຫາກິນ
ລ້ວນແຕ່ເປັນຖິ່ນລູກຫຼານປູ່ຈັນ

ຄົນລຸ້ນເກົ່າ
ລະຫວ່າງພີ່ນ້ອງລາວ - ໄທ
ຜູກຮັກເປັນສ່ຽວ
ສາວໂຄລາດອ້າຍບ່າວວຽງຈັນ

ຈຶ່ງຮູ້ວ່າຄວາມເປັນມາຢ່າງໃດ
ສະໄໝກ່ອນມາເຂົາຈາລຶກໝັ້ນ
ຂອດເຄືອກ້ຽວກັນເຖິງທຸກວັນ
ເຄີຍນັດພົບກັນທີ່ບຸນທາດຫລວງ

ປູ່ຈາກໄດ້ສັ່ງ
ເໝືອນດັ່ງ
ໃຫ້ຫຼານປູ່
ພະທາດພະນົມໃຫ້ແຫນຫວງ

ລູກຫຼານສອງຝັ່ງ
ຜູ້ຮູ້ການໄກໃນຊວງ
ໄປມາຫາສູ່ບູຊາທາດຫຼວງ
ເໝືອນໃຈໜຶ່ງດວງປວງຊົນສອງຝັ່ງ

ຄົນລຸ້ນຍ່າ
ເມື່ອຈວບລາວນຸ່ງສິ້ນໄໝ
ສາວມີກອດແນບຊວງອີກ
ຄິດຮອດອະດີດຄວາມຫຼັງ

ນ້ຳຕາຕ້ອງຫຼັ່ງລິນໄຫຼ
ຜ່ານໂຄລາດໄປນ້ຳຕາຢ່າຫຼັ່ງ
ເໝືອນໃຈຈະພັງ
ສະໄໝຍ່າຍັງເນົາຢູ່ວຽງທອງ

# ໂດຍສານສາຍໃຕ້

ເນື້ອຮ້ອງ,ທຳນອງໂດຍ ດາວວຽງ ບຸດນາໂຄ

ໂດຍສານສາຍໃຕ້
ສາວເອີຍສາວນ້ຳທອນ
ຈົ່ງຢູ່ສຸກຂີ
ຖ້ຽວນີ້ອ້າຍຈຳໃຈຈອນ

ຫ່າງໄກງາມງອນ
ດວງສະໝອນອ້າຍຂໍລາກ່ອນ
ຢ່າມີໂສກເສົ້ານາບັງອອນ
ຖ້ຽວໜ້າຈະມາຫາໃໝ່

ຊີວິດຂອງອ້າຍ
ມັນຄືທະຫານ
ອ້າຍບໍ່ຢາກໜີ
ໂປດຈົ່ງຄິດເຫັນໃຈ

ໂຊເຟີໂດຍສານ
ໄກແຟນດ້ວຍຄວາມຈຳໃຈ
ແຕ່ມີໜ້າທີ່ພາໄປ
ໂຊເຟີສາຍໃຕ້ໂດຍສານ

ຫົວໃຈ
ບໍ່ເຄີຍປ່ຽນໄປ
ຖ້າອ້າຍລວງຕົວະ
ນີ້ຄືສັນຍາຫົວໃຈ

ໜຸ່ມໂດຍສານສາຍໃຕ້
ຮັກດຽວຮັກເຈົ້າດ້ວຍໃຈ
ຂໍໃຫ້ອ້າຍມີອັນເປັນໄປ
ຈາກຊາຍຜູ້ໝາຍຮັກຈິງ

ຍາມໂດຍສານເຄື່ອນ
ໃຈອ້າຍສຸດອາວອນ
ຄິດໄປໄລເລ
ນີ້ລະຄືຄວາມຫ່ວງໃຍ

ຈາກບ້ານນ້ຳທອນ
ເກີດສັງຫອນໃນຫົວໃຈ
ໃຈວາເວ່ຢ້ານນ້ອງມີໃໝ່
ຈາກໜຸ່ມສາຍໃຕ້ໂດຍສານ

# ພົບກັນທີ່ອ່າງນ້ຳທຸມ

ແຕ່ງໂດຍ: ສ. ສີເມືອງຊອງ

ສອງເຮົາພົບກັນ ວັນນັ້ນທີ່ອ່າງນ້ຳທຸມ
ເຫັນນ້ອງຫົວຍຸ້ມ ອ້າຍຫົວແຍ້ມນັດກັນໝັ້ນໝາຍ
ເຮົາແຂ່ງຂັນກັນ ເຮົາໂຮມແຮງກັນກໍ່ສ້າງເໜືອງຝາຍ
ເພື່ອໃຫ້ນ້ຳທຸມໃສ ໄຫລໄປທົ່ວທ້ອງທົ່ງນາ

ສອງເຮົາພົບກັນ ພ້ອມກັນອອກແຮງງານ
ດ້ວຍຄວາມເບີກບານ ຕາມລຳທານນ້ຳທຸມສະຫງ່າ
ຈັ່ງໃດເດນ້ອງ ຂຸດຄອງເໜືອງໄດ້ແລ້ວຈັກຫລາ
ເອົາເດີຢ່າໃຫ້ຂາຍໜ້າ ຢ່າລືມສັນຍາເຮົາແຂ່ງຂັນກັນ

ທຸກຢາດເຫື່ອ ແຮງງານເຮົາຖອກເທລົງ
ຈະໄປປະສົມ ກັບສາຍນ້ຳທຸມໄຫລເຂົ້າທົ່ງນາ
ນາແຊງນາປີ ອຸດົມດີເຂົ້າຂຽວງາມຕາ
ທົ່ງນາອີ່ໄລນາຂ່າ ກວ້າງໄກສຸດຕາໜ້າສະອອນໃຈ

ໂອ! ຊຳບຸ່ງພານ ເຮົານັດກັນຈະຄືນມາໃໝ່
ເຖິງຈະຈາກໄປໄກ ບໍ່ລືມໄດ້ດອກອ່າງນ້ຳທຸມ
ຈະກັບຄືນມາ ມາສ້າງສາເໜືອງຝາຍຊ່ວຍກັນ
ຈະບໍ່ລືມວັນນັ້ນ ເຮົາພົບກັນທີ່ອ່າງນ້ຳທຸມ (ຊ້ຳ)

# ຮັກສາວສີເມືອງ

ເນື້ອຮ້ອງ,ທຳນອງໂດຍ ດາວວຽງ ບຸດນາໂຄ

ສາວສີເມືອງ ຊື່ກະເດື່ອງໄປທົ່ວອານາ
ໜຶ່ງໃນແດນສາທາ ສາວສີເມືອງນັບວ່າໜຶ່ງ
ໄດ້ມາພົບພໍ້ ນວນລະອໍອ້າຍຕົກຕະລຶງ
ສາວສີເມືອງໝາຍເລກໜຶ່ງ ງາມແທ້ ງາມບາດຕາ

ບຸນອອກພັນສາ ຈູດທູບວຽນທຽນງານວັດຄືນນັ້ນ
ສອງເຮົາຄຽງຄູ່ກັນ ນ້ອງຍັງບອກອ້າຍເບິ່ງຈັນທາ
ແລ້ວນ້ອງກໍ່ບອກ ວ່າຮັກອ້າຍເທົ່າຟ້າ
ແລະອ້າຍກໍ່ບອກນ້ອງນະ ວ່າອ້າຍຮັກນ້ອງເທົ່າແຜ່ນດິນ

ກາບວິ້ງວອນ ເຈົ້າແມ່ສີເມືອງຜູ້ສັກສິດ
ຈົ່ງຊ່ວຍນິລະມິດ ໃຫ້ຮັກຂ້ານີ້ສົມຮັກສົມຫວັງ
ໃຫ້ຄວາມຮັກຂ້າ ຍັ້ງຍືນຍາວຍິ່ງຈີຮັງ
ສິ່ງທີ່ຂ້າວ່າຫວັງ ຂໍໃຫ້ຂ້າໄດ້ເປັນເຂີຍສີເມືອງ

ສາວສີເມືອງເອີຍ ຈຳໄດ້ບໍ່ຫຼ້າ
ຄຳທີ່ເຮົາສັນຍາ ສິ້ນອອກພັນສາຈະມາໝາຍໝັ້ນ
ຄ່າດອງສິນສອດ ບ່າວສະຫວັນບໍ່ເຄີຍຫວັ່ນ
ສິ່ງຄາໃຈອ້າຍນັ້ນ ຢ້ານສາວສີເມືອງຫຼອກບອກບໍ່ຈິງ

# ດາວລືມດິນ

ເນື້ອຮ້ອງ,ທຳນອງໂດຍ ດາວວຽງ ບຸດນາໂຄ

ໄດ້ຍິນຂ່າວຄາວ
ວ່ານ້ອງໄປໄດ້ດີ
ຢູ່ສຸກສະບາຍ
ນ້ອງເປັນຄົນມີເງິນ

ເລື່ອງລາວຄົນດີ
ເປັນເສດຖີມີເງິນ
ຂີ່ລົດເກັ່ງເດີນເພີນ
ສັງຄົມເຂົາຊົມຍ້ອງຍໍ

ນ້ອງລືມແລ້ວບໍ່
ປິ່ນປາກະເຕົາ
ລືມອ່ອມຂຽດໂມ້
ຫຼືລືມສວນຮົ້ວສວນແຕງ

ບ້ານນາປ່າເຂົາ
ຕົ້ມປາຄໍ່ໃສ່ໄຂ່ມົດແດງ
ລືມແລ້ວບໍ່ປິ່ນແມງແຄງ
ລືມຜັກຄະແຍງແກງໃສ່ໜໍ່ໄຫຼ່

ດຽວນີ້ຄົນດີ
ຕ້ອງການເງິນຊ່ວຍ
ອີກນ້ອງສອງຄົນ
ນີ້ລະຄືບັນຫາ

ພໍ່,ແມ່ ນ້ອງນັ້ນລົ້ມປ່ວຍ
ແກ້ໄຂຊື້ຢຸກຊື້ຢາ
ຂາດທຶນການສຶກສາ
ຄອບຄົວກຳລັງຂັດສົນ

ຫາກມີເວລາ
ຄືນບ້ານຄືນເຮືອນ
ບໍ່ວ່າຕິວ່ານ້ອງ
ຫຼືໄດ້ເປັນດາວ

ໃຫ້ມາຢ້ຽມເຢືອນ
ເກື້ອກູນຈຸນເຈືອແບ່ງເບົາ
ຈະລືມພໍ່ແມ່ສອງເຖົ້າ
ແລ້ວກັບມາລືມດິນ

# ສາວດົງໂດກ

ເນື້ອຮ້ອງ,ທຳນອງໂດຍ ດາວວຽງ ບຸດນາໂຄ

ໄດ້ຍິນເພງຮ້ອງ
ແຕ່ອ້າຍນີ້ໄດ້ມາເຫັນ
ດິນແດນດົງໂດກ
ແຕ່ສາວກໍ່ງາມໂສພາ

ຍ້ອງສາວບ້ານເກີນງາມເດັ່ນ
ເຫັນສາວດົງໂດກບໍ່ທຳມະດາ
ເປັນບ້ານໂຄກທ້ອງໄຮ່ປາຍນາ
ງາມປຽບທຽບສາວບ້ານເກີນ

ສາວດົງໂດກ
ບໍ່ຮູ້ສ້າງບຸນປາງໃດ
ເຖິງຊີວິດນ້ອງ
ແຕ່ອ້າຍຂໍຮັກສະໜັກໃຈ

ນັບວ່າໂຊກອ້າຍຫຼາຍໆ
ຈຶ່ງມາພົບນ້ອງຈົນໄດ້
ຈະເປັນຊາວນາຊາວໄຮ່
ເປັນເຂີຍແມ່ນ້ອງຊ່ວຍໄຖນາ

ບ່າວນັກສຶກສາ
ແຕ່ນິທານທ້າວເງາະປ່າ
ຫຼືຄົນຢ່າງອ້າຍ
ໂປດນ້ອງຈົ່ງຮັກກະລຸນາ

ຮັກສາວຊາວນາຟ້າບໍ່ຜ່າ
ຍັງໄດ້ຄຽງຄູ່ນາງລິດຈານາ
ນ້ອງບໍ່ໝາຍໃນສາຍຕາ
ຮັກບ່າວໄທໃຕ້ໃຈດີດີ

ສາວດົງໂດກ
ຖ້ານ້ອງບໍ່ຕົກລົງ ໂອເຄ
ຫົວໃຈຂອງອ້າຍ
ຖ້ານ້ອງບໍ່ຮັກກະລຸນາ

ນັບວ່າໂຊກອ້າຍຫຼາຍເດ
ອ້າຍບ່າວປາກເຊຕ້ອງເປັນບ້າ
ກໍ່ໝາຍຕາຍຮ່ວມຊາຍຄາ
ອ້າຍຄົງເປັນບ້າປ່ວຍຕາຍ

# ເຫັນໃຈຄົນຈົນ

ເນື້ອຮ້ອງ,ທຳນອງໂດຍ ສໍ ບົວລະພັນ

ເຫັນໃຈຄົນຈົນ ເກີດນ້ອງໜ້າມົນຄົນດີ
ເງິນແລະຄຳບໍ່ມີ ຈະຊື້ຮັກເຈົ້າມາກ່ອນ
ມີພຽງຫົວໃຈ ດວງດຽວຈະມອບໃຫ້ນ້ອງ
ເຫັນໃຈອ້າຍເກີດໜາເນື້ອທອງ ຢ່າປ່ອຍອ້າຍໝອງຣືໄຫ

ອົນດູແດ່ທ້ອນ ຄົນຈົນຂາດຄູ່ນ້ອມໝ່ຽວ
ດຽວນີ້ຢູ່ຜູ້ດຽວ ຂາດຄົນມາເລົ່າໂລມໃຈ
ທຸກວັນເຫງົາຊວງ ບໍ່ມີຄົນຈະອາໄລ
ຍັງບໍ່ມີຜູ້ໃດສົນໃຈ ຄົນຈົນແສນທໍລະມານ

ຫາກນ້ອງເຫັນໃຈ ຄົນຈົນຢ່າງອ້າຍມາວອນ
ຈະອຸທິດຊີບແດ່ບັງອອນ ໂອດວງສະໝອນຂໍຈິ່ງເຊື່ອໝັ້ນ
ຂໍເປັນທາດໃຈ ນວນລະໄມຈົນຊົ່ວຊີວັນ
ຫາກນ້ອງສາວບໍ່ຄິດຕັດບັ້ນ ຈະຮັກນ້ອງສຸດອຸລາ

ເຫັນໃຈອ້າຍເກີດໜາ ຄົນຈົນບໍ່ມີທີ່ເພິ່ງ
ທົນທຸກຍາກມາເຫິງ ນ້ອງຄຶງບໍ່ທັນຫຼົງໃສ່
ຄົນບໍ່ຫຍາມຢຽດ ຄົນຈົນຄົນທຸກຢ່າງອ້າຍ
ໂອນ້ອງສາວໂປດຄິດເຫັນໃຈ ຄົນຈົນຮັກດຽວໃຈດຽວ

24 / VII
ຫ້າມຈຳໜ່າຍ

# ວຽງໃນຝັນ

ເນື້ອຮ້ອງ,ທຳນອງໂດຍ ສຸຣິວັດ ຣັຕຕະນະສະຫວັນ

ຄອຍເຝົ້າຄອຍ ແຕ່ພຽງຄວາມຝັນ
ຢາກເຫັນວຽງຈັນ ນ້ອງຕ້ອງຝັນທຸກວັນເວລາ
ຊາດນີ້ຄົງສິ້ນ ບຸນວາດສະໜາ
ພຽງແຕ່ຄຳເຂົາກ່າວມາ ງາມໜັກໜາ ໂອ ເມືອງວຽງຈັນ

ພໍໄດ້ຊົມ ດັ່ງໃຈໝັ້ນໝາຍ
ງາມແສນວິໄລ ໂອຫາດຊາຍສົມນາມດອນຈັນ
ປຽບເໝືອນເທວາ ບິນຟ້າເສກສັນ
ປັ້ນແຕ່ງເປັນຂວັນວຽງຈັນ ດັ່ງວິມານສຸດແສນງາມຕາ

ງາມທາດຫຼວງ ຍອດສູງພຽງເມກ
ສົມເປັນເມືອງເອກ ງາມທຸກຢ່າງສຸດພັນລະນາ
ງາມຫໍພະແກ້ວ ແສງວາວແວວສວຍເດັ່ນງາມຕາ
ສົມດັ່ງທີ່ລືກັນມາ ວ່າງາມເໜືອຟ້າແດນໄກ

ພໍໄດ້ຊົມ ຈົນຫຼົງຖິ່ນຖານ
ມາເຫັນວຽງຈັນ ສຸກສຳລານເໜືອເມືອງໃດໆ
ໄດ້ເຫັນລາຕີ ມີແສງສົດໃສ
ເຮືອງຮຸ່ງດັ່ງຟ້າອຳໄພ ຊວນຈິດໃຈໄຝ່ຝັນບໍ່ລືມ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ